# ຄະນະຜູ້ແທນຂັ້ນສູງທະນາຄານແຫ່ງ ສປປ ລາວ ເຂົ້າຢ້ຽມຂໍ່ານັບທ່ານນາຍົກລັດຖະມົນຕີ ສ.ສ ຫວຽດນາມ

ຄະນະຜູ້ແທນຂັ້ນສູງ ທະນາຄານແຫ່ງ ສປປ ລາວ ເຊິ່ງນໍາໂດຍ ທ່ານ ພູເພັດ ຄໍາພູນວົງ ເລຂາຄະນະພັກ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວໄດ້ເດີນທາງເຄື່ອນໄຫວເຮັດວຽກ ແລະ ຢ້ຽມຢາມ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຢ່າງເປັນທາງການນັບແຕ່ວັນທີ 3-7 ທັນວາ 2009 ຜ່ານມາ.

ໃນໄລຍະການເຄື່ອນໄຫວ ແລະ ເຮັດວຽກຢູ່ ສ.ສ ຫວຽດນາມ, ຄະນະຜູ້ແທນຂັ້ນສູງທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຂົ້າຮ່ວມກອງປະຊຸມທະວິພາຄີ ຊຶ່ງຝ່າຍລາວນໍາໂດຍທ່ານ ພູເພັດ ຄໍາພູນວົງ ເລຂາ ຄະນະພັກຜູ້ວ່າການທະນາ ຄານແຫ່ງ ສປປ ລາວ ເປັນຫົວໜ້າ, ຝ່າຍຫວຽດນາມ ຊຶ່ງນໍາ ໂດຍ ທ່ານ ຫງວຽນວັນເຢົາ ກໍາມະການສູນກາງພັກກອມມູນິດ, ຜູ້ວ່າການທະນາຄານ ແຫ່ງລັດ ສ.ສ ຫວຽດນາມ ໂດຍການເຂົ້າຮ່ວມຂອງທ່ານ ນາງ ສູນທອນ ໄຊຍະຈັກ ເອກອັກຄະລັດຖະທູດ ສປປ ລາວ ປະຈໍາ ສ.ສ ຫວຽດນາມ ແລະ ພະນັກງານຂັ້ນນໍາຂອງທະນາຄານກາງຂອງສອງປະເທດ.

ໃນກອງປະຊຸມດັ່ງກ່າວ ທ່ານຜູ້ວ່າການທະນາຄານກາງຂອງລາວ ແລະ ຫວຽດນາມໄດ້ແຈ້ງສະພາບເສດຖະກິດເງິນຕາຂອງແຕ່ລະປະເທດ ແລະ ການປະຕິບັດນະໂຍບາຍເງິນຕາຂອງທະນາຄານກາງຂອງສອງປະເທດ ໃນທ່າມກາງວິກິດການການເງິນຂອງໂລກ ແລະ ສະພາບການຊໍາລະສະສາງສິນຄ້າຊາຍແດນລາວຫວຽດນາມ ຈາກນັ້ນກໍ່ໄດ້ເຊັນບົດບັນທຶກຊ່ວຍຈໍາ (MOU) ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ຫວຽດນາມໂດຍແມ່ນຜູ້ວ່າການຂອງທະນາຄານຂອງ ລາວ ແລະ ຫວຽດນາມ.

ໃນເວລາຕໍ່ມາ, ທ່ານຜູ້ ວ່າການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ຫງວຽນເຕິນຢຸງ ນາຍົກລັດຖະມົນຕີ ສ.ສ ຫວຽດນາມ ທີ່ທໍານຽບລັດຖະບານຢູ່ນະຄອນຫລວງຮ່າໂນ້ຍ, ໃນໂອກາດດັ່ງກ່າວ ທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ແຈ້ງໝາກຜົນຂອງການພົບປະແລກປ່ຽນບົດຮຽນ ລະຫວ່າງທະນາຄານກາງຂອງສອງປະເທດໃຫ້ທ່ານນາຍົກ ລັດຖະມົນຕີຮັບຊາບ, ທ່ານນາຍົກລັດຖະມົນຕີຫວຽດນາມໄດ້ຕີລາຄາສູງຕໍ່ການພົວພັນ ແລະ ຮ່ວມມືແບບພິເສດຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດໂດຍສະເພາະຕໍ່ການພົວພັນຮ່ວມມືລະຫວ່າງຂະແໜງການທະນາຄານຂອງສອງປະເທດໄດ້ຮັບການພັດທະນາເຂົ້າສູ່ລວງເລິກ, ການໂອ້ລົມລະຫວ່າງແຂກ ແລະ ເຈົ້າພາບໄດ້ດໍາເນີນໄປດ້ວຍບັນຍາກາດແຫ່ງຄວາມສາມັກຄີມິດຕະພາບຖານສະຫາຍອ້າຍນ້ອງ.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 11 ທັນວາ 2009

ໃນຕອນແລງຂອງມື້ດຽວກັນ, ທ່ານຜູ້ວ່າການທະນາ ຄານແຫ່ງ ສປປ ລາວ ກໍ່ໄດ້ຕາງຫນ້າໃຫ້ລັດຖະບານແຫ່ງ ສປປ ລາວ ປະດັບຫລຽນໄຊ ຫລຽນກາ ແລະ ໃບຍ້ອງຍໍໃຫ້ແກ່ບັນດາກົມກອງລວມຫມູ່ ແລະ ພະນັກງານທະນາຄານ ຫວຽດນາມ ເນື່ອງໃນໂອກາດ 40 ປີ ແຫ່ງການສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ເຊິ່ງທະນາຄານແຫ່ງລັດຫວຽດນາມ ໄດ້ຊ່ວຍເຫລືອຢ່າງໝົດຈິດໝົດໃຈ ໂດຍໄດ້ຊ່ວຍເຫລືອອຸປະກອນ, ຊ່ວຍກໍ່ສ້າງພະນັກງານລາວ ແລະ ທັງສົ່ງຊ່ຽວຊານວຽກງານທະນາຄານມາຊ່ວຍລາວ ນັບແຕ່ສູນກາງລົງຮອດທ້ອງຖິ່ນເຊິ່ງໄດ້ເປັນການປະກອບສ່ວນອັນໃຫຍ່ຫລວງ ແລະ ສຳຄັນໃຫ້ແກ່ພາລະກິດການປະຕິວັດລາວ.

ນອກນັ້ນ, ຄະນະຜູ້ວ່າ ການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນບົດຮຽນຢູ່ທະນາຄານ ຊາຄອມແບັງ (Sacom bank) ແລະ ຕະຫລາດຫລັກຊັບໃນນະຄອນ ໂຮ່ຈິມິນນຳອີກ.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 11 ທັນວາ 2009